ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ

ເລກທີ: 1287/ຍທຂ.ນວ
ລົງວັນທີ: 19 FEB 2021

# ໜັງສືສະເໜີ

**ຮຽນ:** ທ່ານລັດຖະມົນຕີ ກະຊວງທີ່ດິນ, ພື້ນຖານໂຄງລ່າງ, ການຂົນສົ່ງ ແລະ ທ່ອງທ່ຽວ ປະເທດຍີ່ປຸ່ນ ທີ່ນັບຖື.

**ເລື່ອງ:** ຂໍການຊ່ວຍເຫຼືອກ່ຽວກັບການສ້າງແຜນແມ່ບົດ ແລະ ແຜນໂຄງການ ເຄືອຂ່າຍຕົວເມືອງອັດສະລິຍະຂອງນະຄອນຫຼວງວຽງຈັນ.

- ອີງຕາມໜັງສືສະເໜີຂອງກະຊວງທີ່ດິນ, ພື້ນຖານໂຄງລ່າງ, ການຂົນສົ່ງ ແລະ ທ່ອງທ່ຽວ ປະເທດຍີ່ປຸ່ນ, ສະບັບລົງວັນທີ 22 ທັນວາ 2020.
- ຕາມໜັງສືສະເໜີຂອງ ພະແນກການຕ່າງປະເທດ ຂອງນະຄອນຫຼວງວຽງຈັນ ສະບັບເລກທີ0025/ພຕທ, ລົງວັນທີ 22 ມັງກອນ 2021.

ເພື່ອເຮັດໃຫ້ການພັດທະນາຕົວເມືອງຂອງບັນດານະຄອນເຄືອຂ່າຍຕົວເມືອງອັດສະລິຍະອາຊຽນໄດ້ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການວາງແນວທາງດຳເນີນໂຄງການ ແລະ ອີງໃສ່ການມີເຈດຈຳນົງຈະໃຫ້ການຊ່ວຍເຫຼືອຂອງກະຊວງທີ່ດິນ, ພື້ນຖານໂຄງລ່າງ, ການຂົນສົ່ງ ແລະ ທ່ອງທ່ຽວ ປະເທດຍີ່ປຸ່ນໃນການສຶກສາຮ່າງແຜນແມ່ບົດ ແລະ ແຜນໂຄງການ ກ່ຽວກັບເຄືອຂ່າຍຕົວເມືອງອັດສະລິຍະອາຊຽນ.

ຕໍ່ກັບການສະເໜີດັ່ງກ່າວນັ້ນ, ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະເໜີມາຍັງກະຊວງທີ່ດິນ, ພື້ນຖານໂຄງລ່າງ, ການຂົນສົ່ງ ແລະ ທ່ອງທ່ຽວ ປະເທດຍີ່ປຸ່ນ ຂໍການຊ່ວຍເຫຼືອໃນການສຶກສາຮ່າງແຜນແມ່ບົດຂອງຕົວເມືອງອັດສະລິຍະຂອງນະຄອນຫຼວງວຽງຈັນ, ເພື່ອສະເໜີການນຳນະຄອນຫຼວງວຽງຈັນພິຈາລະນາຮັບຮອງເຊິ່ງ ຈະເປັນບ່ອນອີງໃນການຈັດຕັ້ງປະຕິບັດບັນດາໂຄງການທີ່ຈະສ້າງເປັນຕົວເມືອງອັດສະລິຍະ ດັ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ຊື່ໂຄງການ** : ການສຶກສາຮ່າງແຜນແມ່ບົດຕົວເມືອງອັດສະລິຍະ.
2. **ຊື່ຂອງຕົວເມືອງ** : ນະຄອນຫຼວງວຽງຈັນ.
3. **ຮູບແບບການສຶກສາ:**
   - ສຶກສາສ້າງແຜນແມ່ບົດຕົວເມືອງອັດສະລິຍະຂອງນະຄອນຫຼວງວຽງຈັນ(Master plan for entire smart city in the Vientiane Capital).
   - ສ້າງຄວາມອາດສາມາດໃຫ້ແກ່ພະນັກງານ-ລັດຖະກອນໃນການນຳໃຊ້ເທັກໂນໂລຊີທີ່ທັນສະໄໝເຂົ້າໃນການຄຸ້ມຄອງຜັງເມືອງແບບອັດສະລິຍະ.
   - ຈັດຕັ້ງປະຕິບັດໂຄງການທົດລອງການຄຸ້ມຄອງຜັງເມືອງໃນຂອບເຂດຕົວເມືອງເກົ່າ ຫຼື ເຂດຈະສ້າງຕົວເມືອງໃໝ່ ນາໂງມ-ນາຕານ ຂອງນະຄອນຫຼວງວຽງຈັນໃຫ້ມີຄວາມທັນສະໄໝຂຶ້ນ.

4. ເຫດຜົນໃນການເລືອກໂຄງການ

- ໃນໄລຍະຜ່ານມານະຄອນຫຼວງວຽງຈັນຍັງບໍ່ທັນມີການຮັບຮອງເອົາແຜນແມ່ບົດຂອງຕົວເມືອງອັດສະລິຍະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຈະສ້າງຕົວເມືອງໃຫ້ກ້າວໄປເຖິງຕົວເມືອງອັດສະລິຍະ (Smart City).
- ເພື່ອເປັນການຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ວ່າດ້ວຍ ການພັດທະນານະຄອນຫຼວງວຽງຈັນ ໃນໄລຍະໃໝ່, ເລກທີ 107/ກມສພ, ລົງວັນທີ 30 ເມສາ 2020, ເປັນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກ ນະຄອນຫຼວງວຽງຈັນທີ່ມີທິດທາງການພັດທະນາ ນະຄອນຫຼວງວຽງຈັນໃນໄລຍະໃໝ່ ຄື: ສ້າງນະຄອນຫຼວງວຽງຈັນເປັນ ນະຄອນໜ້າຢູ່ດ້ວຍຕົວຊີ້ວັດ(6ສ), ຍືນຍົງ, ອັດສະລິຍະ ແລະ ທັນເປັນຕົວເມືອງໃໝ່ທີ່ທັນສະໄໝແຕ່ຫົວທີ.
- ຂອບເຂດການສຶກສາຂອງໂຄງການ ແມ່ນຈະໄດ້ອີງໃສ່ຂອບເຂດແຜນຜັງລວມຂອງຕົວເມືອງນະຄອນຫຼວງວຽງຈັນແຕ່ນີ້ຮອດປີ 2030 ທີ່ໄດ້ຜ່ານສະພາປະຊາຊົນແຫ່ງຊາດຮັບຮອງເອົາໃນປີ 2020 ຊຶ່ງກວມເອົາ 288 ບ້ານ ໃນເຂດຕົວເມືອງ ແລະ ມີເນື້ອທີ່ທັງໝົດ 61,600 ເຮັກຕາ ທີ່ກຳນົດເປັນເຂດໃຈກາງຕົວເມືອງຂອງນະຄອນຫຼວງວຽງຈັນ ແລະ ພື້ນທີ່ເຂດຈຸດສຸມຂອງການພັດທະນາທີ່ຈະສ້າງເປັນເມືອງໃໝ່ຂອງນະຄອນຫຼວງວຽງຈັນເຂດບ້ານ ນາໂງມ-ນາຕານ, ເມືອງ ໄຊທານີ.
- ຈຸດປະສົງຂອງການສຶກສາ:
  - ➢ ເພື່ອສ້າງແຜນແມ່ບົດການພັດທະນາຕົວເມືອງຂອງນະຄອນຫຼວງວຽງຈັນທີ່ຈະກ້າວໄປຕາມມາດຕະຖານຕົວເມືອງອັດສະລິຍະ(Smart City) ແລະ ວາງທິດທາງໃນການເລືອກນຳໃຊ້ວິທະຍາການທີ່ທັນສະໄໝເຂົ້າໃນການຄຸ້ມຄອງ ແລະ ບໍລິການຕົວເມືອງ.
  - ➢ ເພື່ອສ້າງຖານຂໍ້ມູນໃຫ້ມີການເຊື່ອມໂຍງ ແລະ ເປັນຄູ່ມືໃນການພັດທະນາແຕ່ລະໜ້າວຽກທີ່ເປັນບູລິມະສິດໃນການສ້າງຕົວເມືອງອັດສະລິຍະ.
- ເປົ້າໝາຍຂອງການສຶກສາໂຄງການ:
  - ➢ ເພື່ອຈັດຕັ້ງປະຕິບັດເປົ້າໝາຍແຜນພັດທະນາຕົວເມືອງ ຂອງນະຄອນຫຼວງວຽງຈັນ ໃຫ້ບັນລຸຕາມເປົ້າໝາຍ ສ້າງເປັນນະຄອນໜ້າຢູ່, ຍືນຍົງ ແລະ ອັດສະລິຍະ.
  - ➢ ນຳເອົາເທັກໂນໂລຊີທີ່ທັນສະໄໝເຂົ້າມາຊ່ວຍໃນການຄຸ້ມຄອງບໍລິຫານລັດ, ການບໍລິການສັງຄົມ ໂດຍສະເພາະການຄຸ້ມຄອງຕົວເມືອງໃຫ້ມີຄວາມສະດວກ, ປອດໄພ, ວ່ອງໄວ ແລະ ສາມາດກວດສອບໄດ້.



ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ

ສຸລິວັນ ພົນມະຫາໄຊ